ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມາທິການແຫ່ງຊາດ
ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ

ເລກທີ 073 /ຄຊກມດ
ນະຄອນຫຼວງວຽງຈັນ, ວັນທີ 08 ພຶດສະພາ 2024

# ຄຳແນະນຳ

**ຮຽນ:** - ບັນດາທ່ານຮອງລັດຖະມົນຕີ, ຮອງປະທານອົງການ, ປະທານຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງ, ອົງການທຽບເທົ່າກະຊວງ.
- ບັນດາທ່ານຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ, ປະທານ ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ແຂວງ ແລະ ນະຄອນຫຼວງວຽງຈັນ.

**ເລື່ອງ:** ການສ້າງຂະບວນການສະເຫຼີມສະຫຼອງວັນເດັກສາກົນ (01 ມິຖຸນາ) ແລະ ສະເຫຼີມສະຫຼອງ ວັນສົນທິສັນຍາ ວ່າດ້ວຍ ສິດທິເດັກ (ວັນເດັກໂລກ) 20 ພະຈິກ ປະຈຳປີ 2024.

- ອີງຕາມ ດຳລັດຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 19/ນຍ, ລົງວັນທີ 25 ມັງກອນ 2023 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ.
- ອີງຕາມ ແຈ້ງການຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 815/ຫສນຍ, ລົງວັນທີ 25 ເມສາ 2024 ກ່ຽວກັບ ການອະນຸມັດທາງດ້ານຫຼັກການ ໃຫ້ສະເຫຼີມສະຫຼອງ ວັນເດັກສາກົນ (01 ມິຖຸນາ) ແລະ ສະເຫຼີມສະຫຼອງ ວັນສົນທິສັນຍາ ວ່າດ້ວຍ ສິດທິເດັກ (ວັນເດັກໂລກ) 20 ພະຈິກ ປະຈຳປີ 2024.

ເພື່ອຮັບປະກັນການສະເຫຼີມສະຫຼອງ ວັນເດັກສາກົນ (01 ມິຖຸນາ 2024) ແລະ ສະເຫຼີມສະຫຼອງ ວັນສົນທິສັນຍາ ວ່າດ້ວຍ ສິດທິເດັກ (ວັນເດັກໂລກ) 20 ພະຈິກ ປະຈຳປີ 2024 ໃນຂອບເຂດທົ່ວປະເທດ ໃຫ້ມີເນື້ອໃນ ແລະ ຫຼາຍຮູບການ ມີຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້, ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ (ຄຊກມດ) ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອຊີ້ນຳ ຄກມດ ຂັ້ນຂອງຕົນ ຈັດຕັ້ງປະຕິບັດກິດຈະກຳເນື່ອງໃນໂອກາດວັນດັ່ງກ່າວ ຕາມຄວາມເໝາະສົມ ແລະ ແທດເໝາະກັບສະພາບເງື່ອນໄຂຕົວຈິງເປັນຕົ້ນ:

1) ການສະເຫຼີມສະຫຼອງ ວັນເດັກສາກົນ (01 ມິຖຸນາ) ປະຈຳປີ 2024:
   - ຈັດຕັ້ງເຜີຍແຜ່ເນື້ອໃນ ສານທ່ານນາຍົກລັດຖະມົນຕີແຫ່ງ ສປປ ລາວ, ປະຫວັດຄວາມເປັນມາຂອງວັນເດັກສາກົນດ້ວຍຮູບການຕ່າງໆ.
   - ຈັດກິດຈະກຳຮ່ວມກັບເດັກ ແລະ ກິດຈະກຳອື່ນໆ ທີ່ເຫັນວ່າແທດເໝາະກັບສະພາບຄວາມເປັນຈິງ ຂອງ ຂະແໜງການ ແລະ ທ້ອງຖິ່ນ.

2) ວັນສົນທິສັນຍາ ວ່າດ້ວຍ ສິດທິເດັກ (ວັນເດັກໂລກ) 20 ພະຈິກ ປະຈຳປີ 2024:

- ຈັດຕັ້ງເຜີຍແຜ່ເອກະສານຕ່າງໆ ເປັນຕົ້ນ: ສົນທິສັນຍາ ວ່າດ້ວຍ ສິດທິເດັກ ແລະ ສອງອະນຸສັນຍາເພີ່ມເຕີມ ລວມທັງ ວິໄສທັດໃນການພັດທະນາເດັກລາວ ລຸ້ນປີ 2030.
- ຈັດກອງປະຊຸມລະດັບສູງ ເພື່ອຕິດຕາມ ແລະ ສະຫຼຸບການຈັດຕັ້ງປະຕິບັດຄວາມໝາຍໝັ້ນ ຂອງ ບັນດາທ່ານ ຮອງເຈົ້າແຂວງ ໃນວຽກສິດທິເດັກ ແລະ ການຫຼຸດຜ່ອນຄວາມທຸກຍາກຂອງເດັກ ໃນ ສປປ ລາວ.
- ຈັດກິດຈະກຳອື່ນໆ ທີ່ຕິດພັນກັບເດັກ ຕາມສະພາບ ແລະ ເງື່ອນໄຂຕົວຈິງ.

ສຳລັບງົບປະມານໃນການຈັດຕັ້ງປະຕິບັດມອບໃຫ້ບັນດາກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງວຽງຈັນ ຈັດສັນງົບປະມານຕາມຄວາມເໝາະສົມ ແລະ ລະດົມການປະກອບສ່ວນຂອງທົ່ວສັງຄົມ ທັງພາຍໃນ ແລະ ຕ່າງປະເທດ.

ດັ່ງນັ້ນ, ຈຶ່ງໄດ້ອອກຄຳແນະນຳສະບັບນີ້ ມາຍັງທ່ານເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ຮອງປະທານ, ຜູ້ປະຈຳການ**

ປະທານ

ນ. ອາລີ ວົງໜໍ່ບຸນທາ